**ການບ້ານບົດທີ 8 ພາກຕົ້ນ**

# ໂປໂລກັບໄປອັນຕີໂອເຂຍ




<u>ໃຫ້ອ່ານ ກຈກ 18:18-22</u>

**1** ໂປໂລເຫັນວ່າຄາລີໂອນເຂົ້າຂ້າງພວກຄຼິດສະຕຽນແລ້ວ.

ກ. ເພິ່ນເລີຍພັກກັບພີ່ນ້ອງອີກດົນປານໃດ? (ກຈກ 18:18) ______________________

ຂ. ເມື່ອໂປໂລລາຈາກເຂົາໄປ ມີສອງຄົນໃດໄປນໍາ? ____________ ແລະ _________

ຄ. ເພິ່ນແຖຫົວກ່ອນຈະລົງເຮືອຈາກເມືອງໃດໄປ? ____________________________

ງ. ເມື່ອຜ່ານເມືອງນັ້ນໄປ ແມ່ນໃຜຈະບົວລະບັດເຂົາ? (ໂລມ 16:1) _______________

ຈ. ຟອຍເບ ບົວລະບັດຄຼິດສະຕະຈັກເມືອງໃດ? ______________________________

**2** ກ. ເຂົາຂ້າມມາເຖິງເມືອງໃດ? (ກຈກ 18:19) ______________________________

ຂ. ໜາຍໄວ້ດ້ວຍຕົວອັກສອນໃດໃນແຜນທີ່? _______________________________

ຄ. ໂປໂລເຂົ້າໄປໂຈດຖຽງກັບພວກຢິວບ່ອນໃດ? _____________________________

ງ. ຄົນຢິວເຫຼົ່ານັ້ນສົນໃຈຟັງແລ້ວຂໍໃຫ້ໂປໂລຢູ່ຕໍ່ໄປ. ໂປໂລບໍ່ຍອມຢູ່ໃນເວລານັ້ນ ແຕ່ເພິ່ນສັນຍາວ່າ ຖ້າພະເຈົ້າເຫັນຊອບຈະເຮັດຫຍັງອີກ? (ກຈກ 18:21) _______________

ຈ. ໂປໂລໄດ້ປະສອງຄົນໃດໄວ້ໃນເມືອງເອເຟໂຊນັ້ນ? (ກຈກ 18:18) ______________

**3** ໂປໂລລົງເຮືອອີກເພື່ອຈະກັບໄປປາແລັດສະຕິນ. ເພິ່ນລົງຈາກເຮືອໃນເມືອງກາຍຊາເລຍ.

ກ. ກາຍຊາເລຍນັ້ນໜາຍໄວ້ດ້ວຍຕົວອັກສອນໃດໃນແຜນທີ່? ___________________

ຂ. ແລ້ວເດີນທາງບົກເຖິງກຸງໃດ? ______________________________________

ຄ. ໜາຍໄວ້ດ້ວຍອັກສອນໃດ? _________________________________________

**4** ໃນບົດຮຽນກ່ອນ ໆ ນັ້ນ ທ່ານໄດ້ຮຽນກ່ຽວກັບຄວາມເປັນຫ່ວງຂອງໂປໂລທີ່ມີຕໍ່ຄຣິດສະຕະຈັກໃນແຂວງຢູດາທີ່ທຸກຍາກຫຼາຍ. ໃນເມື່ອໂປໂລອອກໄປປະກາດຂ່າວປະເສີດເທື່ອທີສາມ ໂປໂລຊັກຊວນໃຫ້ຄຣິດສະຕະຈັກທີ່ມີຄວາມສາມາດຊ່ວຍ ເຫຼືອຮ່ວມມືກັນຊ່ວຍພີ່ນ້ອງທີ່ຂາດໃນແຂວງຢູດາ.

ກ. ໃນ 1 ກລທ 16:1 ໂປໂລຍົກເລື່ອງການໃດ? ______________________________

ຂ. ສຳລັບໃຜ? ______________________________________________________

ຄ. ຈະຝາກຂອງທານນັ້ນໄປໃສ? ______________________________________

**5** ໂປໂລຊອກຫາຄວາມຊ່ວຍເຫຼືອສຳລັບພີ່ນ້ອງທີ່ທຸກຍາກໃນເຂດເຢຣູຊາເລັມຈາກຫຼາຍບ່ອນ. ໂລມ 15:26 ເຫັນວ່າຄຣິດສະຕຽນຈາກສອງແຂວງໃດເຫັນຊອບຈະເຂົ້າສ່ວນໃນການນັ້ນ?

_____________________________________________________________________

**6** ທີ່ໂປໂລຈະເດີນທາງຈາກກຸງເຢຣູຊາເລັມກັບໄປອັນຕີໂອເຂຍນັ້ນ ພະຄຳພີບໍ່ບອກວ່າໄປທາງນ້ຳ ຫຼື ທາງບົກ ແຕ່ເຫັນວ່າໂປໂລມີຂ່າວເຫດການຈາກແຂວງຄາລີເລ ດັ່ງນັ້ນອາດຈະເປັນໄປໄດ້ວ່າເພິ່ນ ຜ່ານແຂວງຄາລີເລໂດຍທາງບົກ. ໃຫ້ອ່ານ 1 ກລທ 15:6 ມີ 500 ກວ່າຄົນເຫັນພະເຢຊູໃນແຂວງ ຄາລີເລປະມານ 20 ປີກ່ອນທີ່ໂປໂລຂຽນ 1 ກລທ ນັ້ນ.

ກ. ທີ່ໂປໂລຮູ້ວ່າເຂົາຍັງເປັນຢູ່ສ່ວນຫຼາຍ ອາດຈະສະແດງວ່າໂປໂລຜ່ານໄປແຂວງໃດຈຶ່ງຈະຮູ້ເລື່ອງ? ______________________________________________________

ຂ. ແຂວງຄາລີເລໝາຍໄວ້ດ້ວຍອັກສອນໃດໃນແຜນທີ່? ________________________

**7** ກັບມາບ້ານໃນເມືອງອັນຕີໂອເຂຍແລ້ວ ໂປໂລຢູ່ດົນປານໃດ? (ກຈກ 18:23)

_____________________________________________________________________

*ການເດີນທາງໄປປະກາດເທື່ອທີສອງ ຈົບລົງແລ້ວ!*

## ສະຫລູບເລື່ອງການອອກໄປປະກາດເທື່ອທີສອງ

**8** ກ. ເຊື່ອວ່າເມື່ອໂປໂລກັບມາແລ້ວເພິ່ນຈະລາຍງານແກ່ຄຣິດສະຕະຈັກໃດ? ___________

ຂ. ຈະກ່າວເລື່ອງການຂອງພະເຈົ້າໃນສອງແຂວງໃດ? __________________________

**9** ຈະບັນທຶກເລື່ອງ 3 ຄຣິດສະຕະຈັກໃດທີ່ຕັ້ງໄວ້ໃນແຂວງມາເກໂດເນຍ? ______________

______________________________ ແລະ ______________________________

**10** ກ. ອີກຄຣິດສະຕະຈັກໜຶ່ງທີ່ຕັ້ງໄວ້ໃນສູນກາງການຄ້າ ຄືຄຣິດສະຕະຈັກໃດ? _____________

ຂ. ໃນແຂວງໃດ? ____________________________________________________

**11** ໂປໂລເວົ້າເລື່ອງຊາຍໜຸ່ມທີ່ຮັບເຊື່ອເທື່ອກ່ອນໃນເມືອງ ລີຊະທາ. ໃນເທື່ອທີສອງນີ້ຊາຍຄົນນັ້ນ ມາຮ່ວມປະກາດພະທຳກັບໂປໂລ ຄືໃຜ? ________________________________

**12** ກ. ໂປໂລອາດຈະບອກວ່າ ມີເທື່ອໜຶ່ງທີ່ເພິ່ນຕັ້ງໃຈໄປແຂວງໃດ ແຕ່ພະວິນຍານຂອງພະເຈົ້າ ຫ້າມບໍ່ ໃຫ້ເຂົ້າໄປ? ____________________

ຂ. ແທນທີ່ຈະໄປແຂວງອາເຊຍນັ້ນ ໂປໂລໄປເມືອງໃດຝັ່ງທະເລ? ____________________

ຄ. ບ່ອນນັ້ນໂປໂລພົບກັບຜູ້ໃດທີ່ເປັນໝໍຢາ? ____________________

**13** ກ. ໃນເມືອງໂທອາດໂປໂລເຫັນຊາຍຊາດໃດໃນນິມິດ? ____________________

ຂ. ຊາຍໃນນິມິດນັ້ນອ້ອນວອນໃຫ້ໂປໂລມາເຖິງແຂວງໃດໃນທະວີບຢູໂລບ? ____________________

ຄ. ເຂົາໄປເຖິງເມືອງໃດກ່ອນ? ____________________

ງ. ເມືອງຟີລິບປອຍນັ້ນຂຶ້ນກັບຈັກກະພັດໃດ? ____________________

**14** ໃນເມືອງນັ້ນມີ 4 ຄົນທີ່ສຳຄັນຄື:

ກ. ຍິງຊາດຢິວຂາຍຜ້າສີມ່ວງອ່ອນທີ່ພະເຈົ້າຊົງໄຂຈິດໃຈຊື່ຫຍັງ? ____________________

ຂ. ແມ່ນຄົນຢ່າງໃດທີ່ໂປໂລສັ່ງໃຫ້ຜີໝໍດູອອກ? ____________________

ຄ. ແມ່ນຄົນອາຊີບໃດທີ່ຮັບເຊື່ອຫຼັງຈາກແຜ່ນດິນຫວັ່ນໄຫວ? ____________________

ງ. ແມ່ນໃຜທີ່ຮ່ວມກັບໂປໂລໃນການປະກາດພະທຳ ຊຶ່ງຍັງຢູ່ຟີລິບປອຍ ເວລາໂປໂລໄປປ່າວປະກາດ ທີ່ອື່ນ? ____________________

**15** ກ. ໂປໂລຍັງຢູ່ແຂວງມາເກໂດເນຍ ແຕ່ຫຼັງຈາກເພິ່ນລາຈາກຟີລິບປອຍໄປເພິ່ນປະກາດພະທຳ ໃນເມືອງໃດອີກ? ____________________

ຂ. ຫຼັງຈາກຖືກໄລ່ອອກຈາກໂຮງທຳ ໂປໂລໄປຢູ່ເຮືອນໃຜ? ____________________

ຄ. ອາລິດຕາໂຂ ເປັນຊາຍໜຸ່ມທີ່ຮັບເຊື່ອໃນເທຊະໂລນີກ. ຕໍ່ໄປອາລິດຕາໂຂເດີນທາງໄປປ່າວປະກາດຮ່ວມກັບໃຜ? ____________________

**16** ກ. ພວກຄົນຢິວ ມາບຸກລຸກເຮືອນຂອງໃຜເພື່ອເອົາໂປໂລກັບຊີລາອອກມາ? ____________________

ຂ. ດັ່ງນັ້ນໂປໂລແລະຊີລາອອກຈາກເທຊະໂລນີກໄປເມືອງໃດ? ____________________

ຄ. ພວກຢິວໃນເມືອງນັ້ນ ມີໃຈເຫຼື້ອມໃສຮັບເອົາຫຍັງ? ____________________

ງ. ແລະຄົ້ນເບິ່ງຫຍັງທຸກວັນ? ____________________

ຈ. ຕໍ່ໄປໂປໂລໜີຈາກພວກຢິວໃນແຂວງມາເກໂດເນຍໄປກຸງໃດ? ____________________

**17** ກ. ກຸງອາແຖນນັ້ນຢູ່ແຂວງໃດ? ____________________

ເປັນກຸງທີ່ເປັນກາງແຫ່ງວັດທະນະທຳ ແລະການສຶກສາຂອງຊາວກຼີກ.

ຂ. ໃນກຸງອາແຖນນັ້ນໂປໂລເທດສະໜາສາມບ່ອນໃດ? ____________________

____________________ ແລະ ____________________

**18** ໃນກຸງອາແຖນນີ້ ໂປໂລເທດສະໜາ (ກຈກ 17:22-31). ມີບາງຄົນທີ່ຮັບເຊື່ອ.

ກ. ຜູ້ທີ່ເປັນສະມາຊິກສະພາຊື່ຫຍັງ? ____________________

ຂ. ຍິງຄົນໜຶ່ງຊື່ຫຍັງ? ____________________

**19** ກ. ໃນແຂວງອະຊາຢາ ໂປໂລຢູ່ດົນທີ່ສຸດໃນເມືອງໃດ? ___________________________

ຂ. ເພິ່ນລ້ຽງຊີວິດໂດຍອາຊີບໃດ? ___________________________________________

ຄ. ຫຍິບຜ້າເຕັນພ້ອມກັບສອງຄົນໃດ? _________________ ແລະ _________________

ງ. ໂປໂລເລີ້ມຕົ້ນເທດສະໜາໃນໂຮງທຳຕາມເຄີຍ ແຕ່ພວກຢິວບໍ່ຕ້ອນຮັບໃນໂຮງທຳ ແລ້ວເພິ່ນຂຶ້ນເທດສະໜາໃນເຮືອນໃຜ? ______________________________________

ຈ. ສອງຄົນໃດມາຮ່ວມຢູ່ນຳໂປໂລອີກໃນເມືອງໂກລິນໂທ? __________ ແລະ ________

ສ. ເຂົານຳຂ່າວດີຈາກຄຣິດສະຕະຈັກໃດໃນແຂວງມາເກໂດເນຍ? ___________________

ຊ. ໂປໂລຂຽນຈົດໝາຍຈັກສະບັບໄປເຖິງຄຣິດສະຕະຈັກນັ້ນ? _____________________

**20** ໂກລິນໂທເປັນເມືອງໃຫຍ່ທີ່ຜິດສິນທຳຢ່າງໜັກ, ເຂົານັບຖືພະທຽມສອງອົງ

ກ. ອົງໃດເພດຊາຍ? ___________________________________________________

ຂ. ອົງໃດເພດຍິງ? ____________________________________________________

**21** ກ. ໃນເມືອງໂກລິນໂທນັ້ນ ໂປໂລເຫັນໃຜໃນການນິມິດ? _________________________

ຂ. ຜູ້ປົກຄອງແຂວງອະຊາຢາທີ່ເຂົ້າຂ້າງໂປໂລຕໍ່ຕ້ານຄົນຢິວທີ່ມາຟ້ອງໂປໂລຊື່ຫຍັງ? _____

*ດັ່ງນັ້ນໂປໂລຮັບການໜູນໃຈຈາກຜູ້ປົກຄອງແຂວງນັ້ນ.*

**22** ກ. ເມື່ອໂປໂລຂີ່ເຮືອກັບໄປແລ້ວ ເພິ່ນແວ່ເມືອງໃດໃນແຂວງອາເຊຍ? ________________

ຂ. ໂປໂລປະສອງຄົນໃດໄວ້ໃຫ້ສອນພີ່ນ້ອງໃນບ່ອນນັ້ນ? ________________ ແລະ __________ ແລ້ວສັນຍາວ່າຈະກັບມາຫາເຂົາອີກ!

*ເພື່ອທວນຄືນເລື່ອງການບ້ານທັງໝົດໃຫ້ຮຽນຮູ້ຄຳຕອບໃນບົດເສັງທັງໝົດ ແລ້ວໃຫ້ ທວນຄືນຮູບທຸກຮູບອີກດ້ວຍ.*

ຄຳຕອບ:

**1** *ກ. ອີກຫຼາຍວັນ ຂ. ປີຊະກີລາແລະອາກີລາ ຄ. ເກນເຂໄອ ງ. ຟອຍເບ*
*ຈ. ເກນເຂໄອ*

**2** *ກ. ເອເຟໂຊ ຂ. ຟ ຄ. ໃນໂຮງທຳ ງ. ຈະກັບມາຫາພວກເຂົາອີກ*
*ຈ. ປີຊະກີລາ ແລະ ອາກີລາ*

**3** *ກ. ກ ຂ. ເຢລູຊາເລັມ ຄ. ຢ*

**4** *ກ. ການຮັບໂຮມຂອງທານ ຂ. ໄພ່ພົນຂອງພະເຈົ້າ ຄ. ໄປກຸງເຢູຊາເຣັມ*

**5** *ມາເກໂດເນຍ ແລະ ອະຊາຢາ*

**6** *ກ. ອາດຈະຜ່ານແຂວງຄາລີເລໄປ ຂ. ຄ*

**7** *ຢູ່ຈັກຫວ່າງໜຶ່ງແລ້ວ*

**8** *ກ. ອັນຕີໂອເຂຍ ຂ. ມາເກໂດເນຍ ແລະ ອະຊາຢາ*

**9** *ຟີລິບປອຍ ເທຊະໂລນິກ ແລະ ເບຣອຍອາ*

**10** *ກ. ໂກລິນໂທ ຂ. ອະຊາຢາ*

**11** *ຕີໂມທຽວ*

**12** *ກ. ອາເຊຍ ຂ. ໂທອາດ ຄ. ລູກາ*

**13** *ກ. ມາເກໂດເນຍ ຂ. ແຂວງມາເກໂດເນຍ ຄ. ຟີລິບປອຍ ງ. ໂລມ*

**14** *ກ. ລີເດຍ ຂ. ຍິງໃຊ້ ຄ. ທຳມະໂຮງ ງ. ລູກາ*

**15** *ກ. ເທຊະໂລນິກ ຂ. ຢາຊິນ ຄ. ໂປໂລ*

**16** *ກ. ຢາຊິນ ຂ. ເບຣອຍອາ ຄ. ພະທຳ ງ. ພະຄຳພີ ຈ. ອາແຖນ*

**17** *ກ. ອະຊາຢາ ຂ. ໂຮງທຳ ບ່ອນປະຊຸມຊົນ ແລະ ສະພາ*

**18** *ກ. ດີໂອນີຊີໂອ ຂ. ດາມາລີ*

**19** *ກ. ໂກລິນໂທ ຂ. ຫຍິບຜ້າເຕັນ ຄ. ອາກີລາ ແລະ ປີຊະກີລາ*
*ງ. ຄາໂຢ (ຕີຕີໂຢຍູຊະໂຕ) ຈ. ຊີລາ ແລະ ຕີໂມທຽວ ສ. ເທຊະໂລນິກ ຊ. 2 ສະບັບ*

**20** *ກ. ອາໂປໂລ ຂ. ອາໂຟດິດ*

**21** *ກ. ພະຜູ້ເປັນເຈົ້າ (ພະເຢຊູ) ຂ. ຄາລີໂອນ*

**22** *ກ. ເອເຟໂຊ ຂ. ອາກີລາ ກັບ ປີຊະກີລາ*

**ການບ້ານບົດທີ 8 ພາກປາຍ**

# ທວນຄືນເລື່ອງຈົດໝາຍຂອງໂປໂລ
# ທີ່ມີສ່ວນກ່ຽວຂ້ອງກັບການໄປປະກາດເທື່ອທີສອງ

*ແທນທີ່ຈະຕອບຄຳຖາມຢ່າງທີ່ເຄີຍ ໃຫ້ທ່ານກັບໄປທວນຄືນບົດເສັງ "ໃນການປະຊຸມ" ທຸກບົດ. ຖ້າຈຳເປັນອາດຈະຕ້ອງກັບໄປເບິ່ງໃນບົດສອນດ້ວຍ. ທ່ານຮຽນມາເຖິງນີ້ແລ້ວ ຄິດວ່າຄວນຈະຮູ້ບັງຄັບຕົວໃນການທວນຄືນ.*